00/RFD-00/00

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ

ກົມຄື້ນຄວາມຖີ່ ເລກທີ:………/ກຄຖ

ນະຄອນຫຼວງວຽງຈັນ, ວັນທີ:……..………..........

**ໃບອະນຸຍາດ**

**ນຳໃຊ້ຄື້ນຄວາມຖີ່ວິທະຍຸ**

- ອີງຕາມ ກົດໝາຍວ່າດ້ວຍ ຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງໄປສະນີ ໂທລະຄົມມະຄົມແລະ ການສື່ສານ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມ ຄື້ນຄວາມຖີ່ ສະບັບເລກທີ 1683/ປທສ, ລົງວັນທີ 05 ເມສາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ແຜນຜັງຄື້ນຄວາມຖີ່ແຫ່ງຊາດ ສະບັບເລກທີ 2654/ປທສ, ລົງວັນທີ 13 ຕຸລາ 2015;
- ອີງຕາມ ໃບສະເໜີຂອງ.......................................................................

**ກົມຄື້ນຄວາມຖີ່ ເຫັນດີອອກໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ ສົກປີ 0000 ໃຫ້ ບໍລິສັດ .............**

1. ທີ່ຢູ່: ບ້ານ........., ເມືອງ ............., ແຂວງ .............., ໂທ .....................
2. ຄວາມຖີ່ນຳໃຊ້ :......................;
3. Modulation:................, Designation of Emission: .........................;
4. ສະຖານທີ່ນຳໃຊ້: ບ້ານ ..........., ເມືອງ ..........., ແຂວງ ............;
5. ອາຍຸການນຳໃຊ້ໃບອະນຸຍາດ: ເລີ່ມແຕ່ວັນທີ **00/00/00** ໝົດອາຍຸນຳໃຊ້ **00/00/00**.

**ຫົວໜ້າກົມ**

## I. ເງື່ອນໄຂການນຳໃຊ້ຄື້ນຄວາມຖີ່:

1. ຈິ່ງນໍາໃຊ້ຄື້ນຄວາມຖີ່ຕາມທີ່ໄດ້ຮັບອະນຸມັດ ແລະ ລະບຸໄວ້ໃນໃບອະນຸຍາດສະບັບນີ້ເທົ່ານັ້ນ;
2. ປະຕິບັດຕາມຂໍ້ກໍານົດ ກົດລະບຽບກ່ຽວກັບການນໍາໃຊ້ຄື້ນຄວາມຖີ່ຂອງ ສປປ ລາວ, ອຸປະກອນກະຈາຍຄື້ນຕ້ອງຮັບປະກັນບໍ່ກໍ່ໃຫ້ເກີດມີການລົບກວນ, ຍິນຍອມໃຫ້ເຈົ້າໜ້າທີ່ຂອງກະຊວງ ປທສ ກວດກາ ແລະ ກວດສອບໄດ້ໂດຍບໍ່ມີເງື່ອນໄຂໃດ;
3. ໃຫ້ຕໍ່ໃບອະນຸຍາດກ່ອນໝົດອາຍຸ **60** ວັນ;
4. ກໍລະນີໃບອະນຸຍາດເສຍຫາຍ ຕ້ອງແຈ້ງໃຫ້ ກົມໂທລະຄົມມະນາຄົມ ໂດຍດ່ວນ;
5. ຜູ້ນໍາໃຊ້ຄື້ນຄວາມຖີ່ຕ້ອງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ ຕາມລະບຽບການຂອງລັດທີ່ກໍານົດອອກ;
6. ໃນກໍລະນີ ກະຊວງ ປທສ ມີການປັບປຸງ ຈັດສັນ ແລະ ກໍານົດຄື້ນຄວາມຖີ່ ທີ່ໄດ້ອະນຸຍາດໄປແລ້ວຄືນໃຫມ່ຜູ້ຖືໃບອະນຸຍາດຄື້ນຄວາມຖີ່ໃນຍ່ານດັ່ງກ່າວ ຕ້ອງສົ່ງຄື້ນຄວາມຖີ່ທີ່ຕົນນໍາໃຊ້ຢູ່ຄືນໃຫ້ ກະຊວງ ປທສ ເພື່ອຈັດສັນຄືນໃຫມ່. ເຊິ່ງຈະເຮັດໃຫ້ການນໍາໃຊ້ຄື້ນຄວາມຖີ່ ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ຜູ້ໄດ້ຮັບອະນຸຍາດນໍາໃຊ້ຄື້ນຄວາມຖີ່ຕ້ອງປະຕິບັດຕາມການປັບປຸງ ຈັດສັນ ແລະ ຂໍ້ກໍານົດການນໍາໃຊ້ຄື້ນຄວາມຖີ່ ຂອງ ກະຊວງ ປທສ ໃນແຕ່ລະໄລຍະ

**II. ຂໍ້ຫ້າມສໍາລັບເຈົ້າຂອງໃບອະນຸຍາດ:**

1. ຫ້າມນໍາໃຊ້ຄື້ນຄວາມຖີ່ລົບກວນ, ສ້າງຄວາມເສຍຫາຍຕໍ່ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
2. ຫ້າມໂອນ, ຂາຍ ແລະ ໃຫ້ເຊົ່າສິດນໍາໃຊ້ຄື້ນຄວາມຖີ່ໂດຍບໍ່ໄດ້ຮັບອະນຸຍາດ;
3. ຫ້າມນໍາໃຊ້ຄື້ນຄວາມຖີ່ເຂົ້າໃນຈຸດປະສົງອື່ນທີ່ບໍ່ໄດ້ກໍານົດໄວ້ໃນໃບອະນຸຍາດ;
4. ຫ້າມນໍາໃຊ້ຄື້ນຄວາມຖີ່ເກີນຂອບເຂດອະນຸຍາດ;
5. ຫ້າມມີພຶດຕິກໍາອື່ນທີ່ລະເມີດຕໍ່ກົດໝາຍ.

ຂ້າພະເຈົ້າໄດ້ອ່ານຂໍ້ຄວາມຂ້າງເທິງ ແລະ ເຂົ້າໃຈແຈ້ງແລ້ວ ຖ້າຫາກວ່າ ຂ້າພະເຈົ້າລະເມີດຈະຍອມຮັບຜິດຕາມລະບຽບກົດໝາຍຢ່າງບໍ່ມີເງື່ອນໄຂ.

**ລາຍເຊັນຜູ້ຖືໃບອະນຸຍາດ**

ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ
ບ້ານດົງໂພສີ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ, ໂທ: 021 833006 ແຟັກ: 021 833005.